ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ 0235
ວັນທີ 28 FEB 2018
ໂທລະສັບ 021 217770

ເລກທີ: ໐10/ຫກ

ນະຄອນຫຼວງວຽງຈັນ, ວັນທີ: ໒໒ ກຸມພາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 12-16/02/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 2,10% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນປະຊາຊົນທີ່ຂໍສະຫວັດດີການຫວ່າງງານຄັ້ງທຳອິດເພີ່ມຂຶ້ນ ຈາກ 221.000 ຄົນ ໃນອາທິດຜ່ານມາ ມາເປັນ 230.000 ຄົນ ຂອງອາທິດທີ 10/02/2018 ແລະ ຜົນຜະລິດພາກອຸດສາຫະກຳຂອງເດືອນ 01/2018 ຫຼຸດລົງທີ 0,1% ຈາກເພີ່ມຂຶ້ນ 0,4% ໃນເດືອນຜ່ານມາ[1].

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 05-09/02/2018 | ອາທິດນີ້ 12-16/02/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2263 | 1,2526 | -2,10% |
| ເຢນ/ໂດລາ | 109,04 | 106,01 | 2,86% |
| ບາດ/ໂດລາ | 31,72 | 31,26 | 1,47% |
| ເປໂຊ/ໂດລາ | 51,55 | 52,23 | -1,31% |
| ຣູເປັຍ/ໂດລາ | 13.625,00 | 13.557,00 | 0,50% |
| ໂດລາສິງກະໂປ/ໂດລາ | 1,3294 | 1,3071 | 1,71% |
| ຢວນ/ໂດລາ | 6,2961 | 6,3438 | -0,75% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 1,93% ຈາກ 60,68 ໂດລາ/ບາເຣວ ມາເປັນ 61,85 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນກາຊວນຂອງ ສ.ອາເມລິກາ ຫຼຸດລົງ 0,46 ລ້ານບາເຣວ ຂອງອາທິດທີ 09/02/2018 ຈາກເພີ່ມຂຶ້ນ 3,93 ລ້ານບາເຣວ

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

ໃນອາທິດຜ່ານມາ[2]. ພ້ອມກັນນັ້ນ, ລັດຖະມົນຕີກະຊວງພະລັງງານຂອງປະເທດຊາອຸດິອາລາເບຍ ໄດ້ໃຫ້ຄຳເຫັນວ່າ ການລະບຸດໃນການຢຸດການຫຼຸດກຳລັງການຜະລິດຈະບໍ່ເກີດຂຶ້ນໃນປີນີ້; ປະເທດທັງໃນ ແລະ ນອກກຸ່ມໂອເປັກ ຍັງສືບຕໍ່ຫຼຸດກຳລັງການຜະລິດຢ່າງຕໍ່ເນື່ອງ.

- ສຳລັບລາຄາຄຳເພີ່ມຂຶ້ນ 3,33% ຈາກ 1.316,29 ໂດລາ/ອອນ ມາເປັນ 1.360,15 ໂດລາ/ອອນ ເນື່ອງຈາກການອ່ອນຄ່າລົງຂອງເງິນໂດລາສະຫະລັດ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ ແລ້ວຫັນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,18% ແຕ່ອ່ອນຄ່າລົງ 1,30% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,29% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 3,77% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 09/02/2018 | | | ອາທິດນີ້ 16/02/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[3] | | | | | | | | | | | | |
| ໂດລາ | 8.297,81 | 8.318,82 | 8.303,86 | 8.281,55 | 8.305,00 | 8.288,79 | 0,20% | 0,17% | 0,18% | 0,24% | 0,26% | 0,29% |
| ບາດ | 261,63 | 263,36 | 262,72 | 265,21 | 266,88 | 266,18 | -1,35% | -1,32% | -1,30% | -3,84% | -3,79% | -3,77% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ເພີ່ມຂຶ້ນ 1,54% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 12,84%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,02% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 10,88%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (09-15/02/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 17,75 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 48,55 ລ້ານໂດລາ ແລະ ຂາຍໂດລາໄດ້ 30,80 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 502,18 ລ້ານບາດ (ໃນນີ້ຊື້ບາດໄດ້ 174,85 ລ້ານບາດ ແລະ ຂາຍບາດໄດ້ 677,03 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາເພີ່ມຂຶ້ນ 30,62% ແຕ່ເງິນບາດຫຼຸດລົງ 13,94%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ບໍ່ມີການຊື້-ຂາຍ ເງິນໂດລາ ແລະ ເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 11,55 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 39,80 ລ້ານ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

---

[2] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 02-05/02/2018 | | ອາທິດນີ້ 09-15/02/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **34,95** | **244,97** | **48,55** | **174,85** | **38,91%** | **-28,62%** |
| - ທ/ຄທຸລະກິດລັດ | 12,71 | 149,69 | 13,05 | 65,20 | 2,68% | -56,44% |
| - ທ/ຄທຸລະກິດອື່ນໆ | 22,24 | 95,28 | 35,50 | 109,65 | 59,62% | 15,08% |
| **2. ການຂາຍເງິນຕາຕ່າງປະເທດ** | **25,80** | **744,91** | **30,80** | **677,03** | **19,38%** | **-9,11%** |
| - ທ/ຄທຸລະກິດລັດ | 13,94 | 199,10 | 17,80 | 101,12 | 27,69% | -49,21% |
| - ທ/ຄທຸລະກິດອື່ນໆ | 11,86 | 545,81 | 13,00 | 575,91 | 9,61% | 5,51% |
| **ຊື້-ຂາຍສຸດທິທທກ** | **9,15** | **-499,94** | **17,75** | **-502,18** | **93,99%** | **0,45%** |
| - ຜິດດ່ຽງຊື້-ຂາຍ | 26,18% | -204,08% | 36,56% | -287,21% | 39,65% | 40,73% |
| **- ມູນຄ່າການຊື້-ຂາຍ** | **60,75** | **989,88** | **79,35** | **851,88** | **30,62%** | **-13,94%** |
| **3.ການຊື້-ຂາຍລະຫວ່າງທຫລກັບ ທທກ** | **2,00** | **0,00** | **0,00** | **0,00** | | |
| - ທຫລຊື້ຈາກທທກ | 2,00 | 0,00 | 0,00 | 0,00 | | |
| - ທຫລຂາຍໃຫ້ທທກ | 0,00 | 0,00 | 0,00 | 0,00 | | |
| **4.ຊື້-ຂາຍລະຫວ່າງທທກດ້ວຍກັນ** | **14,39** | **76,20** | **11,55** | **39,80** | | |
| **5.ທຫລກັບ ພາກສ່ວນອື່ນໆ** | **0,00** | **200,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 200,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 02/2018 ຄາດວ່າຈະຢູ່ໃນລະດັບ 0,99% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ຫຼຸດລົງ 40,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 30,11 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 39,6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 41,45 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 1.398 ສະບັບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 787 ສະບັບ ເທົ່າກັບ 128,80% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 539,88 ຕື້ກີບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 254,43 ຕື້ກີບ ເທົ່າກັບ 89,13% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (09-15/02/2018) ມີທັງໝົດ 3.537 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.514 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 102,53 ຕື້ກີບ ຈາກ 1.135,97 ຕື້ກີບ ມາເປັນ 1.238,49 ຕື້ກີບ ເທົ່າກັບ 9,02%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 23 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າຫຼຸດລົງຈຳນວນ 163,35 ຕື້ກີບ ຈາກ 200,46 ຕື້ກີບ ມາເປັນ 37,11 ຕື້ກີບ ເທົ່າກັບ 81,48%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 964,79 ຈຸດ ຫຼຸດລົງ ຈາກ 970,06 ຈຸດ ຫຼື ເທົ່າກັບ 0,54% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 706.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,29 ຕື້ກີບ ເພີ່ມຂຶ້ນ 59,16% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 68,12% ຂອງມູນຄ່າການ ຊື້-ຂາຍທັງໝົດ.

➢ **ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)** (ຫົວໜ່ວຍມູນຄ່າ 1.000 ກີບ)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| BCEL | 199.700 | 1.142.040.000 | 5.719 | **382.400** | **2.193.770.000** | **5.737** | 91,49 | 92,09 | 18 | 0,32 |
| EDL-GEN | 64.900 | 286.060.000 | 4.408 | **20.300** | **93.200.000** | **4.591** | -68,72 | -67,42 | 183 | 4,16 |
| LWPC | 100 | 600.000 | 6.000 | - | - | **6.600** | -100 | -100 | 600 | 10 |
| PTL | 100 | 210.000 | 2.100 | **3.400** | **6.840.000** | **2.012** | 3.300 | 3.157,14 | -88 | -4,20 |
| SVN | - | - | 2.950 | **100** | **290.000** | **2.900** | - | - | -50 | -1,69 |
| PCD | 10.000 | 15.000.000 | 1.500 | **600** | **900.00** | **1.500** | -94 | -94,00 | - | - |
| ທັງໝົດ | 274.800 | 1.443.910.000 | | **706.600** | **2.298.104.700** | | 157,13 | 59,16 | | |

## 3. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມການແນະນຳວຽກງານສຳຄັນຮີບດ່ວນພາຍໃນຄະນະບໍລິຫານງານພັກ ທຫລ ທີ່ (ທຫລ), ❷ ກອງປະຊຸມຝຶກອົບຮົມກ່ຽວກັບຂັ້ນຕອນການສ້າງຕັ້ງສະມະຄົມ, ມູນນິທິ ທີ່ (ເມືອງແກ້ວອຸດົມ ແຂວງວຽງຈັນ), ❸ ກອງປະຊຸມສ້າງນິຕິກຳເພື່ອຜັນຂະຫຍາຍດຳລັດວ່າດ້ວຍມາດຕະຖານພື້ນຖານ ແລະ ມາດຕະຖານພັດທະນາ ທີ່ (ທຫລ), ❹ ກອງປະຊຸມທ່ານ ນາຍົກ-ຮອງນາຍົກລັດຖະມົນຕີປະຈຳເດືອນ ກຸມພາ 2018 ທີ່ (ຫ້ອງການສຳນັກງານນາຍົກ), ❺ ກອງປະຊຸມຄະນະຮັບຜິດຊອບພິທີການ ງົບປະມານ ແລະ ສະຖານທີ່ສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ), ❻ ກອງປະຊຸມຄະນະສະເພາະກິດກໍລະນີຕຳຫຼວດໄທຍຶດເງິນ 98 ລ້ານບາດ ຈາກຄົນລາວ ທີ່ (ກົມຕຳຫຼວດເສດຖະກິດ), ❼ ກອງປະຊຸມກະກຽມເນື້ອໃນເພື່ອເຂົ້າຮ່ວມກອງປະຊຸມ ລັດຖະມົນຕີເສດຖະກິດອາຊຽນແບບວົງແຄບ ທີ່ (ກະຊວງອຸດສາຫະກຳ ແລະ ການຄ້າ) ແລະ ❽ ກອງປະຊຸມປຶກສາຫາລືກ່ຽວກັບວຽກງານການໂອນເງິນຂ້າມທະນາຄານດ້ວຍຕູ້ ATM ກັບບັນດາສະມະຊິກ LAPS;
- ສຳເລັດການຮັບຮອງລະບຽບວ່າດ້ວຍການຮັບຄຳສັ່ງ, ການເກັບຮັກສາຄຳສັ່ງ ແລະ ການໃຫ້ຄຳແນະນຳລູກຄ້າຂອງບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ;
- ສຳເລັດການເຜີຍແຜ່ເອກະສານສຳຄັນ ທີ່ (ທຫລ) ດັ່ງນີ້: ❶ ແຈ້ງການສະບັບເລກທີ 2090/ທສນຍ, ກຄສ; ❷ ຖະແຫຼງການຮ່ວມລະຫວ່າງ ສປປ ລາວ ແລະ ສປ. ຈີນ; ❸ ບົດບັນທຶກຄວາມເຂົ້າໃຈລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານພັດທະນາແຫ່ງປະເທດຈີນ (MOU); ❹ ມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 076/ສພຊ ແລະ 075/ສພຊ ແລະ ❺ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 397/ນຍ;
- ສຳເລັດການຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກ: ❶ ປະທານ ແລະ ຜູ້ບໍລິຫານຂັ້ນສູງຂອງທະນາຄານ Standard Chartered ປະຈຳປະເທດໄທ ແລະ ❷ ຄະນະທ່ານທູດຝຣັ່ງ ປະຈຳລາວ ເພື່ອປຶກສາຫາລືວຽກ AML/CFT.

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າປັບປຸງບົດແນະນຳຂັ້ນຕອນການກະກຽມຕິດຕັ້ງລະບົບການໂອນເງິນແບບທັນທີໃຫ້ສອດຄ່ອງກັບຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນແບບທັນທີ ແລະ ❷ ຄົ້ນຄວ້ານະໂຍບາຍກ່ຽວກັບການຍົກເວັ້ນຄ່າທຳນຽມ 0,3% ຂອງລັດຖະບານໃຫ້ແກ່ຜູ້ສ້າງສະພາບຄ່ອງໃຫ້ຕະຫຼາດຫຼັກຊັບລາວ;
- ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບ ເພື່ອກະກຽມສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ), ❷ ກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນ ກຸມພາ 2018 ທີ່ (ຫສນຍ), ❸ ກອງປະຊຸມສະພາບໍລິຫານ ທພລ ຄັ້ງປະຖົມມະລຶກ ທີ່ (ທະນາຄານພັດທະນາລາວ), ❹ ກອງປະຊຸມຄະນະຮັບຜິດຊອບຄົ້ນຄວ້າ ແລະ ກະກຽມຄວາມພ້ອມຮອບດ້ານໃນການສະໝັກເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ຊຸດໃໝ່, ❺ ກອງປະຊຸມປຶກສາຫາລື ເພື່ອຄວາມເປັນເອກະພາບພາຍໃນຄະນະ ກ່ຽວກັບຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ, ❻ ກອງປະຊຸມການຈັດຕັ້ງຜັນຂະຫຍາຍຜົນສຳເລັດການດຳເນີນຊີວິດການເມືອງປັບປຸງປົວແປງພັກ ຢູ່ອົງຄະນະພັກ ທຫລ ທີ່ (ທຫລ), ❼ ກອງປະຊຸມປຶກສາຫາລືກະກຽມວຽກງານປະເມີນຜົນປະຈຳປີການປະຕິບັດວຽກງານຂອງພະນັກງານ ທຫລ ປະຈຳປີ 2017 ທີ່ (ທຫລ), ❽ ກອງປະຊຸມຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ) ແລະ ❾ ກອງປະຊຸມຄະນະກຳມະການລະດັບສູງວຽກງານເຊື່ອມໂຍງຂະແໜງການເງິນອາຊຽນ (SLC) ຄັ້ງທີ 15 ແລະ ກອງປະຊຸມວຽກງານເສີມສ້າງຄວາມອາດສາມາດ (SCCB) ຄັ້ງທີ 14 ທີ່ (ປະເທດ ບຣູໄນ ດາລູສະລາມ);
- ກະກຽມຕ້ອນຮັບການມາເຮັດວຽກຂອງຄະນະຫ້ອງວ່າການສູນກາງພັກ ທີ່ (ທຫລ).

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ສຸກັນ ຈັນທະວົງ